ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ
ພະແນກໂຍທາທິການ ແລະ ຂົນສົ່ງ

# ບົດບັນທຶກ

ກອງປະຊຸມປຶກສາຫາລື ແລະ ຊີ້ແຈງຕໍ່ຄຳສະເໜີຂອງນາງ ນາລິນທອນ ພິມຍາພັນ ກ່ຽວການຕິດຕັ້ງເສົາ ສັນຍານຂອງບໍລິສັດລາວໂທລະຄົມມະນາຄົມມະຫາຊົນຢູ່ໜ່ວຍ 19 ບ້ານທົ່ງກາງ ເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ

ໃນຕອນເຊົ້າຂອງວັນພະຫັດ 29 ພຶດສະພາ 2024 ເວລາ 8:30ໂມງ ຢູ່ທີ່ຫ້ອງປະຊຸມຂອງພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວວຽງຈັນໄດ້ຈັດກອງປະຊຸມຂຶ້ນ ໂດຍພາຍໃຕ້ການເປັນປະທານຂອງທ່ານ ປອ ສົມໃຈຫວັງ ເດດອຸດົມ ຮອງຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ເຊິ່ງມີຜູ້ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ທັງໝົດ 09 ພາກສ່ວນຄື:

1. ອົງການຄຸ້ມຄອງໂທລະຄົມມະນາຄົມກະຊວງເຕັກໂນໂລຊີ ແລະ ການສື່ສານ.
2. ກົມຄົ້ນຄວ້າຄວາມຖີ່ວິທະຍຸສື່ສານກະຊວງເຕັກໂນໂລຊີ ແລະ ການສື່ສານ.
3. ພະແນກສາທາລະນະສຸກ ນະຄອນຫຼວງວຽງຈັນ.
4. ຕາງໜ້າພະແນກເຕັກໂນໂລຊີ ແລະ ການສື່ສານ ນະຄອນຫຼວງວຽງຈັນ
5. ຕາງໜ້າຫ້ອງວ່າການປົກຄອງ ເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ
6. ຕາງໜ້າຂະແໜງເຄຫາຜັງ-ເມືອງ ນໍ້າປະປາ ແລະ ສຸຂາພິບານພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ.
7. ບໍລິສັດລາວໂທລະຄົມມະນາຄົມມະຫາຊົນ.
8. ນາຍບ້ານ ບ້ານທົ່ງກາງ ເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ.
9. ນາງນາລິນທອນ ພິມຍາພັນ ຜູ້ສະເໜີ.

( ມີລາຍຊື່ຜູ້ເຂົ້າຮ່ວມຕິດຄັດມາພ້ອມນີ້ ) .

## I. ຈຸດປະສົງຂອງກອງປະຊຸມ

- ເພື່ອປຶກສາຫາລື ແລະ ຊີ້ແຈງຕໍ່ຄຳສະເໜີຂອງນາງ ນາລິນທອນ ພິມຍາພັນ ກ່ຽວການຕິດຕັ້ງເສົາສັນຍານໂທລະຄົມຢູ່ໜ່ວຍ 19 ບ້ານທົ່ງກາງ ເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ ຂອງບໍລິສັດລາວໂທລະຄົມມະນາຄົມມະຫາຊົນ.

ຜ່ານການປຶກສາຫາລືປະກອບຄຳເຫັນຂອງແຕ່ລະພາກສ່ວນສາມາດສະຫຼຸບເປັນເອກະພາບກັນ ດັ່ງນີ້:

1. ເຫັນດີໃຫ້ບໍລິສັດລາວໂທລະຄົມມະນາຄົມມະຫາຊົນສືບຕໍ່ຕິດຕັ້ງເສົາສົ່ງສັນຍານໂທລະຄົມເພາະມີຄວາມຈຳເປັນແທ້ ແລະ ຍັງເປັນການຮັບໃຊ້ສ່ວນລວມໂດຍສະເພາະແມ່ນຮັບໃຊ້ສະຖານທູດ,ສຳນັກງານອົງການ,

ໂຮງຮຽນ,ປະຊາຊົນບ້ານທົ່ງກາງ ແລະ ບ້ານໃກ້ຄຽງ ນອກນີ້ຍັງສອດຄ່ອງກັບແຜນການພັດທະນາເສດຖະກິດ-ສັງຄົມຂອງນະຄອນຫຼວງວຽງຈັນ.

2. ການອອກໃບອະນຸຍາດຕິດຕັ້ງເສົາສັນຍານໂທລະຄົມຂອງພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນໃຫ້ແກ່ບໍລິສັດລາວໂທລະຄົມມະນາຄົມມະຫາຊົນ ແມ່ນປະຕິບັດຕາມລະບຽບຜັງເມືອງ ແລະ ຄູ່ມືເຕັກນິກຂອງພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ສະບັບເລກທີ 2536/ຍທຂ.ນວ,ລົງວັນທີ 2 ເມສາ 2021.

3. ຈຸດທີ່ຕັ້ງເສົາສັນຍານໂທລະຄົມແມ່ນໄດ້ຮັບການເຫັນດີຈາກເຈົ້າຂອງດິນຕາມໃບຕາດິນ ຕອນດິນເລກທີ 121 ອອກຊື່ ທ້າວ ກໍ່າ ວົງນະລາດ ແລະ ໄດ້ມອບສິດໃຫ້ນາງ ອອຍ ໂດຍມີສັນຍາເຊົ່າດິນເລກທີ 0119/ລລທ ລົງວັນທີ 15 ກຸມພາ 2024.

4. ພາຍຫຼັງຕິດຕັ້ງເສົາສັນຍານໂທລະຄົມສໍາເລັດແລ້ວ ສະເໜີໃຫ້ບໍລິສັດລາວໂທລະຄົມມະນາຄົມມະຫາຊົນ ເຮັດໜັງສືເຖິງພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ເພື່ອອອກໃບອະນຸຍາດຢັ້ງຢືນຄວາມຖືກຕ້ອງໃນຂັ້ນຕອນສຸດທ້າຍ.

ພາຍຫຼັງການປຶກສາຫາລືຊີ້ແຈງ ແລະ ຕົກລົງເຫັນດີເປັນເອກພາບຕາມເງື່ອນໄຂຂ້າງເທິງແລ້ວ ປະທານກອງປະຊຸມຈຶ່ງໄດ້ກ່າວປິດກອງປະຊຸມໃນເວລາ 10:00 ໂມງ ຂອງວັນດຽວກັນ.

ດັ່ງນັ້ນ,ຈຶ່ງເຮັດບົດບັນທຶກກອງປະຊຸມສະບັບນີ້ໄວ້ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໃນຂັ້ນຕອນຕໍ່ໄປ.

ປະທານກອງປະຊຸມ

ຜູ້ບັນທຶກ

ປອ.ສົມໃຈຫວັງ ເດດອຸດົມ